**<u>ແຜນການສອນ</u>**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 4 ເມສາ 2010 (04-04-2010)**

---

**<u>ເມື່ອວັນຄືນພຣະຊົນກາຍເປັນວັນພັກທັມມະດາ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (1 ໂກຣິນໂທ 15:1-4, 12-19, 54-58)

**<u>ເປົ້າໝາຍຂອງບົດຮຽນ:</u>**

ບົດຮຽນນີ້ໄດ້ເວົ້າເຖິງພຣະເຢຊູໄດ້ຄືນພຣະຊົນມາອີກ ແລະພວກເຮົາສາມາດເອົາມາປະກອບໃຊ້ໃນຊີວິດ.

**<u>ຄວາມສຳຄັນຂອງບົດຮຽນ:</u>**

ບົດຮຽນນີ້ຊ່ອຍໃຫ້ທ່ານໄວ້ວາງໃຈ ໃນການຄືນພຣະຊົນຂອງອົງພຣະເຢຊູ ແລະເພື່ອຈະດຳຣົງຊີວິດປະຈຳວັນ ໃຫ້ສົມກັບອົງພຣະເຢຊູໄດ້ຄືນພຣະຊົນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>**

ສຳລັບຄົນສ່ວນຫລາຍ ວັນຄືນພຣະຊົນຂອງອົງພຣະເຢຊູນັ້ນ ເປັນພຽງວັນຢຸດພັກທັມມະດາ ເພື່ອຂາຍ ແລະຊື້ກະຕ່າຍ, ເຊື່ອງໄຂ່, ແລະຕຽມຕົວເຂົ້າສູ່ຣະດູໃບໄມ້ປົ່ງ. ບາງຄົນກໍເຖິງເວລາພາຄອບຄົວໄປພັກຜ່ອນໃນຫາດຊາຍຕ່າງໆ ວັນຄືນພຣະຊົນນີ້ມີຫລາຍຄົນພາຄອບຄົວໄປນະມັສການໃນພຣະວິຫານ. ແຕ່ວ່າເຮັດຢ່າງໃດ ເພື່ອໃນວັນນີ້ຈະເປັນວັນສຳຄັນພິເສດໄດ້? ບົດຮຽນນີ້ຈະຊີ້ນຳໃຫ້ທ່ານເຫັນຄວາມສຳຄັນ ແລະເປັນວັນພິເສດ ພ້ອມທັງປ່ຽນແປງຊີວິດຂອງຄົນເຮົາໄດ້.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ໃນເມື່ອຄົນທັງຫລາຍໄດ້ຍິນຄຳວ່າ "ຢຸດພັກວັນອີສເຕີ" ແລ້ວເຂົາເຈົ້າຄິດວ່າແນວໃດ? ມີຄວາມໝາຍແນວໃດສຳລັບເຂົາເຈົ້າ?
- ນຳພານັກຮຽນສົນທະນາເຣື່ອງຄວາມໝາຍຂອງວັນອີສເຕີ, ເຂົາເຈົ້າຕີຄວາມໝາຍວ່າຢ່າງໃດແດ່?
- ໂບດເມືອງໂກຣິນໂທໄດ້ໄປໃນທາງທີ່ຜິດແນວໃດແດ່? ໃຫ້ອ່ານຫົວຂໍ້ໃຫຍ່ແຕ່ລະຂໍ້ໃນບົດຮຽນມື້ນີ້:
- ມີບາງສິ່ງທີ່ຜິດພາດໄປໃນເມື່ອອີສເຕີກາຍມາເປັນວັນຢຸດພັກງານອີກຢ່າງນຶ່ງ. ຊຶ່ງຄວາມໝາຍຂອງ

ວັນອິສເຕີໄດ້ເອົາສິ່ງອື່ນມາປະປົນດ້ວຍ ແມ້ກະທັ້ງຄຣິສຕຽນຫລາຍຄົນກໍເຊັ່ນກັນ.

- ບົດຮຽນໃນມື້ນີ້ສາມາດຊ່ວຍການສັບສົນເລື່ອງວັນອິສເຕີໃຫ້ຂາວແຈ້ງ, ສະນັ້ນພວກເຮົາສາມາດມີຄວາມເຊື່ອໄວ້ວາງໃຈໄດ້ ໃນການຮັບໃຊ້ ແລະຊົມຊື່ນໃນການຄືນພຣະຊົນຂອງພຣະຄຣິດ.

1.**<u>ຈົ່ງຮູ້ຈັກວ່າທ່ານເຊື່ອຢ່າງໃດ:</u>** (1 ໂກຣິນໂທ 15:1-4)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 15:1-4
- ຈິດປະສົງໃນການຂຽນ (1 ໂກຣິນໂທ 15:1ກ)ຂອງທ່ານໂປໂລໃນຕອນນີ້ຄືແນວໃດ? ໃຫ້ນັກຮຽນຂີດກ້ອງໃນບົດຮຽນຂອງເຂົາເຈົ້າບ່ອນທີ່ວ່າ ບັນດາຜູ້ທີ່ເຊື່ອໃນເມືອງໂກຣິນໂທໄດ້ທຳຕາມຂ່າງປະເສີດ (1 ໂກຣິນໂທ 15:1ຂ). ຂີດວົງອ້ອມບ່ອນທີ່ຂ່າວປະເສີດໄດ້ເຮັດກັບຊາວໂກຣິນໂທ. (1 ໂກຣິນໂທ 15:2)
- ພວກເຮົາຄວນລຸກຂຶ້ນເພື່ອຕິດຕໍ່ພົວພັນກັບຊີວິດຂອງຄົນໃນໂລກໃຫ້ທັນປ່ຽນມາໃນທາງຣິດເດດຂ່າວປະເສີດໄດ້ຢ່າງໃດ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (1 ໂກຣິນໂທ 15:1-4)

1. ແມ່ນຫຍັງທີ່ທ່ານໂປໂລຕ້ອງການເສີມໃຫ້ມີຄວາມແຈ່ມແຈ້ງຊັດເຈນ ແລະດ້ວຍເຫດໃດ? ເປັນຫຍັງຈຶ່ງວ່າເປັນສ່ວນປະກອບອັນສຳຄັນເພື່ອໃຫ້ບັນດາຜູ້ທີ່ເຊື່ອມີໂອກາດເຂົ້າໃຈແຈ້ງຂຶ້ນໃນເຣື່ອງທີ່ເຂົາເຈົ້າເຊື່ອຖື?
2. ຖ້າມີຜູ້ໃດຜູ້ນຶ່ງຖາມທ່ານວ່າ ຂ່າວປະເສີດທັງໝົດແມ່ນກ່ຽວກັບເຣື່ອງຫຍັງ, ຈຸດສຳຄັນທີ່ທ່ານຈະເນັ້ນໃຫ້ເຂົາເຂົ້າໃຈນັ້ນຄືແນວໃດ? ເປັນດ້ວຍເຫດຜົນອັນໃດທີ່ທ່ານປະຕິເສດການອະທິບາຍຂ່າວປະເສີດບາງຕອນ?
3. ທ່ານໂປໂລໄດ້ຢືນຢູ່ໃນປະຫວັດແຫ່ງຄວາມຈິງແນວໃດ?
4. ການສເລີມສລອງວັນອິສເຕີໄດ້ເຮັດໃຫ້ທ່ານເຂັ້ມແຂງຢືນໝັ້ນທຸກວັນຕລອດທັງປີຢ່າງໃດ?
5. ທ່ານໄດ້ມີຜົນທີ່ເຮັດໃຫ້ຄົນທັງຫລາຍຮູ້ວ່າທ່ານໄດ້ຢືນຢູ່ຈຸດໃດບໍ່?

2.**<u>ໃຫ້ວາດພາບເບິ່ງເຖິງຄວາມເຊື່ອການປາສຈາກການຄືນພຣະຊົນ:</u>** (1 ໂກຣິນໂທ 15:12-19)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 15:12-19
- ນຳພານັກຮຽນສລຸບເຖິງວ່າເປັນຫຍັງໂບດໃນເມືອງໂກຣິນໂທເຮັດໄປໃນທາງທີ່ຜິດ.
- ອອກຄວາມຄິດຄວາມເຫັນເຣື່ອງ ແມ່ນຫຍັງທີ່ບັນດາຜູ້ທີ່ເຊື່ອສາມາດເຮັດໃຫ້ການສເລີມສລອງການຄືນມາຈາກຕາຍຂອງພຣະຄຣິດຢ່າງແທ້ຈິງ?
- ຄຳໃດທີ່ເຂົາເຈົ້າຄວນຈະປ່ຽນໃສ່ຄຳວ່າ "ໄຮ້ຄ່າ" ໃນຂໍ້ 17.
- ຊີວິດຂອງທ່ານຈະເປັນແນວໃດ ຖ້າພຣະເຢຊູບໍ່ເປັນຄືນມາຈາກຕາຍ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (1 ໂກຣິນໂທ 15:12-19)

- ທ່ານໂປໂລໄດ້ເທສນາໃຫ້ຊາວເມືອງໂກຣິນໂທຟັງແນວໃດແດ່? ການເວົ້າຂອງຄຣູສອນປອມເປັນແນວໃດ?
- ແມ່ນຫຍັງທີ່ເປັນການສະແດງອອກຂອງພວກຄຣູສອນຈອມປອມ?
- ການຄືນພຣະຊົນຂອງພຣະຄຣິດຈຳເປັນທີ່ສຸດສຳລັບຄວາມເຊື່ອຂອງຄຣິສຕຽນຢ່າງໃດ? ສຳລັບຄວາມເຊື່ອຂອງທ່ານເດ?
- ເປັນຫຍັງຈຶ່ງວ່າ ຊີວິດຂອງຄຣິສຕຽນຈຶ່ງເປັນຊີວິດທີ່ມີຄຸນຄ່າທັງການດຳຣົງຢູ່ປະຈຸບັນ ແລະອະນາຄົດດ້ວຍ?

3 . **ຈົ່ງພິຈາລະນາເບິ່ງຕົວຂອງພວກເຮົາເອງ:** (1 ໂກຣິນໂທ 15:54ຂ-58)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 15:54ຂ-58
- ໃຫ້ນັກຮຽນຂີດກ້ອງຄໍາທີ່ລື້ມຄືນໃນຂໍ້ ທີ 54,55, ແລະ 57. ເປັນຫຍັງຄໍາທີ່ວ່າຊັຍຊະນະຈຶ່ງເປັນຄໍາທີ່ດີທີ່ສຸດສໍາລັບການຄືນພຣະຊົນ. ຄໍາວ່າຕາຍຈະບໍ່ມີອີກໃນຊີວິດນີ້ ເພາະຄວາມຕາຍໄດ້ປະຣາຊັຍພຣະເຢຊູ.
- ໃຫ້ນັກຮຽນຄິດເບິ່ງວ່າປັດຈຸບັນນີ້ເຂົາເຈົ້າໄດ້ຢູ່ໃນຄວາມເຊື່ອທີ່ຖືກຕ້ອງທີ່ສຸດແລ້ວ. ໃຫ້ອ່ານຂໍ້ທີ 54ຂ-55
- ໃນເມື່ອພວກເຮົາເຫັນຊັຍຊະນະທຸກສິ່ງທີ່ພວກເຮົາໄດ້ຕໍ່ສູ້ມາ ແລ້ວພວກເຮົາຈະຕອບສນອງຢ່າງໃດ?
- ໃຫ້ນັກຮຽນອ່ານຂໍ້ທີ 57 ພ້ອມກັນ.
- ໃຫ້ນັກຮຽນອອກຄວາມຄິດຄວາມເຫັນ ທາງທີ່ຜູ້ທີ່ເຊື່ອທັງຫລາຍໄດ້ມີຄວາມແນ່ນອນໃຈທີ່ໄດ້ຂອບຄຸນພຣະເຈົ້າສໍາລັບຊັຍຊະນະທີ່ພຣະຄຣິດທີ່ໄດ້ຊັຍຊະນະທຸກຢ່າງເໜືອສັດຕຣູທັງຫລາຍ.
- ແມ່ນຫຍັງແດ່ທີ່ຄຣິສຕຽນສາມາດທໍາໄດ້?
- ມີທາງນຶ່ງທີ່ພວກເຮົາແນ່ໃຈໃນການຂອບພຣະຄຸນຄື ການຮັບໃຊ້ດ້ວຍຄວາມຮັກ. ໃຫ້ນັກຮຽນເກັບກໍາເອົາຈາກຂໍ້ທີ 58 ວ່າຄຣິສຕຽນໄດ້ມີຊີວິດຢູ່ເພາະວ່າການວາຍພຣະຊົນຂອງພຣະຄຣິດໄດ້ໃຫ້ຊັຍຊະນະແກ່ເຂົາເຈົ້າ.
- ແມ່ນຫຍັງທີ່ອົງພຣະຜູ້ເປັນເຈົ້າໄດ້ຊົງທໍາງານທີເກີນກວ່າໃນສິ່ງທີ່ພວກເຮົາຕ້ອງການ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 1 ໂກຣິນໂທ 15:54ຂ-58

1. ການຄືນມາຈາກຕາຍມີຫຍັງກ່ຽວຂ້ອງກັບບັນດາຜູ້ທີ່ເຊື່ອໃນປັດຈຸບັນນີ້?
2. ຄົນທັງຫລາຍມີທ່າທີແນວໃດຕໍ່ການຄືນພຣະຊົນຂອງພຣະເຢຊູຄຣິດ ມັນມີບັນຫາຕໍ່ເຂົາເຈົ້າແນວໃດ?
3. ຂໍ້ພຣະທັມຕ່າງໆ ເຫລົ່ານີ້ໄດ້ດົນໃຈທ່ານໃຫ້ຮັບໃຊ້ອົງພຣະຜູ້ເປັນເຈົ້າຢ່າງໃດ?
4. ເຂົາເຈົ້າໄດ້ໃຫ້ຄວາມເຊື່ອໝັ້ນໃນການເປັນພຍານໃນການຄືນພຣະຊົນຂອງພຣະຜູ້ເປັນເຈົ້າແນວໃດ?

## ພຣະຄັມພີແຫ່ງຄວາມຈິງ

- ຄຣິສຕຽນຕ້ອງການຄວາມເຂົ້າໃຈ ແລະປົກປ້ອງຫລັກສາສນາຂອງການການຄືນພຣະຊົນຊຶ່ງຈໍາເປັນທີ່ສຸດສໍາລັບຄວາມລອດພົ້ນຂອງພວກເຮົາ.
- ຄຣິສຕຽນຄວນມີຄວາມຮູ້ຫລັກຄໍາສອນໃນການຄືນພຣະຊົນທີ່ໄດ້ຊົງເປີດເຜີຍແກ່ຄຣິສຕຽນ ໃຫ້ເປັນຄົນທີ່ແຕກຕ່າງຈາກນັກປັສຍາ ແລະສາສນາອື່ນໆ.
- ຄຣິສຕຽນຄວນຂອບພຣະຄຸນພຣະເຈົ້າສໍາລັບຄວາມເຊື່ອໝັ້ນການຄືນພຣະຊົນຂອງພຣະເຢຊູຄຣິດ.
- ຄຣິສຕຽນຄວນຢູ່ເພື່ອພຣະເຈົ້າແຕ່ລະມື້ລະວັນ ການຮູ້ຈັກຄ່າແຮງງານເຂົາເຈົ້າພຣະອົງຈະເປັນຜູ້ປະທານໃຫ້.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**